# ການປະເມີນການເລີ້ມຕົ້ນຊັ້ນອະນຸບານ ທີ່ດີທີ່ສຸດ

## ຄູ່ມືສໍາລັບພໍ່ແມ່ແລະຜູ້ດູແລ

**ການປະເມີນການເລີ້ມຕົ້ນຊັ້ນອະນຸບານທີ່ດີ ທີ່ສຸດແມ່ນການປະເມີນທົ່ວຣັດທີ່ຊ່ວຍໃຫ້ບັນດາຄູລະບຸຄວາມສາມາດທາງດ້ານການຮູ້ໜັງສືພາສາອັງກິດ ແລະ ຕົວເລກຂອງນັກຮຽນແຕ່ລະຄົນໃນຕອນເລີ້ມຕົ້ນຂອງຊັ້ນອະນຸບານ.**



ເດັກນ້ອຍເລີ້ມເຂົ້າໂຮງຮຽນດ້ວຍທັກສະການຮູ້ໜັງສື ແລະ ຕົວເລກຕັ້ງແຕ່ຕົ້ນໆ, ຄວາມຮູ້ ແລະ ຄວາມເຂົ້າໃຈທີ່ພັດທະນາຈາກການເຊື່ອມຕໍ່ກັບໂລກ ແລະ ຄົນອ້ອມຂ້າງ. ການປະເມີນການເລີ້ມຕົ້ນຊັ້ນອະນຸບານທີ່ດີທີ່ສຸດປະກອບດ້ວຍອົງປະກອບການຮູ້ຫນັງສື ແລະ ຕົວເລກ ແລະໃຫ້ຂໍ້ມູນແກ່ຄູກ່ຽວກັບຈຸດແຂງ ແລະ ຄວາມຕ້ອງການສ່ວນບຸກຄົນຂອງນັກຮຽນ.

ການປະເມີນສະໜັບສະໜູນບັນດາຄູໃນການພັດທະນາໂຄງການການສອນແລະການຮຽນທີ່ສ້າງຈາກສິ່ງທີ່ນັກຮຽນຮູ້. ຄູຈະນັ່ງກັບນັກຮຽນແຕ່ລະຄົນ, ໂດຍສຸມໃສ່ສິ່ງທີ່ເຂົາເຈົ້າສາມາດເຮັດໄດ້. ລູກຂອງທ່ານບໍ່ຈໍາເປັນຕ້ອງກຽມໂຕ ຫຼື ຮຽນສໍາລັບການປະເມີນນີ້. ຍ້ອນວ່າເດັກນ້ອຍໄດ້ຮຽນຮູ້ໃນອັດຕາທີ່ແຕກຕ່າງກັນ, ບໍ່ຈໍາເປັນຕ້ອງເປັນຫ່ວງຖ້າຫາກວ່າລູກຂອງທ່ານບໍ່ສາມາດຕອບຄໍາຖາມໄດ້ທຸກຂໍ້.

ຫຼັງຈາກການປະເມີນບໍ່ດົນ, ຄູຈະໃຫ້ຂໍ້ມູນກ່ຽວກັບທັກສະ, ຄວາມຮູ້ແລະຄວາມເຂົ້າໃຈທີ່ລູກຂອງທ່ານສະແດງໃຫ້ເຫັນໃນລະຫວ່າງການປະເມີນ.

ການປະເມີນການເລີ້ມຕົ້ນຊັ້ນອະນຸບານທີ່ດີທີ່ສຸດແມ່ນລວມເຖິງນັກຮຽນທັງໝົດ. ຖ້າພາສາອັງກິດບໍ່ແມ່ນພາສາບ້ານຂອງທ່ານ ຫຼື ລູກຂອງທ່ານຕ້ອງການການປັບປ່ຽນ, ກະລຸນາຕິດຕໍ່ໂຮງຮຽນຂອງທ່ານເພື່ອຂໍເອົາຂໍ້ມູນເພີ້ມເຕີມກ່ຽວກັບວິທີສະໜັບສະໜູນລູກຂອງທ່ານ.

### ການປະເມີນການຮູ້ໜັງສື

ວຽກງານການຮູ້ໜັງສືຖືກອອກແບບມາເພື່ອລະບຸວ່ານັກຮຽນສາມາດຂຽນຊື່ຂອງເຂົາເຈົ້າ, ຈື່ຈໍາສຽງ, ຕົວອັກສອນແລະຄໍາທີ່ຄຸ້ນເຄີຍ, ແລະຈື່ຈໍາລາຍລະອຽດກ່ຽວກັບໜັງສືຂະໜາດສັ້ນທີ່ໄດ້ອ່ານໃຫ້ພວກເຂົາຟັງໄດ້ຫຼືບໍ່.

ໃນລະຫວ່າງການປະເມີນການຮູ້ໜັງສື, ຄູຈະຖາມລູກຂອງທ່ານເຊັ່ນ:

- 'ຟັງຄໍາເຫຼົ່ານີ້: map, tap. ເຈົ້າຄິດເຖິງຄໍາສັບອື່ນທີ່ຄ້ອງຈອງໄດ້ບໍ່?'
- (ຫຼັງຈາກອ່ານປຶ້ມສັ້ນ) 'ເຈົ້າບອກຂ້ອຍກ່ຽວກັບເລື້ອງທີ່ຂ້ອຍຫາກໍອ່ານໃຫ້ເຈົ້າຟັງໄດ້ບໍ?'

ຄໍາຖາມເຫຼົ່ານີ້ຊ່ວຍໃຫ້ຄູກໍານົດວ່າລູກຂອງທ່ານສາມາດຈື່ຄໍາສັບທີ່ອອກສຽງຄືກັນ ແລະ ຈື່ຈໍາຂໍ້ມູນຈາກໜັງສືສັ້ນທີ່ອ່ານໃຫ້ເຂົາເຈົ້າຟັງໄດ້ຫຼືບໍ່. ສິ່ງເຫຼົ່ານີ້ແມ່ນທັກສະການຮູ້ໜັງສືທີ່ສໍາຄັນທີ່ເດັກນ້ອຍຈະພັດທະນາໃນໄລຍະປີທໍາອິດຂອງເຂົາເຈົ້າຢູ່ໃນໂຮງຮຽນ.

### ການປະເມີນຕົວເລກ

ວຽກງານຕົວເລກແມ່ນກ່ຽວຂ້ອງກັບແນວຄວາມຄິດຂອງຕົວເລກເບື້ອງຕົ້ນ ແລະ ຖືກອອກແບບເພື່ອລະບຸວ່ານັກຮຽນສາມາດນັບໄດ້ດີປານໃດ, ຕົວເລກໃດທີ່ເຂົາເຈົ້າສາມາດຈື່ຈໍາໄດ້, ບໍ່ວ່າຈະສາມາດນັບວັດຖຸ, ບວກ ຫຼື ລົບຕົວເລກຂະໜາດນ້ອຍ ແລະ ຈື່ຈໍາຮູບແບບການເຮັດຊໍ້າໄດ້ຫຼືບໍ່.

ໃນລະຫວ່າງການປະເມີນຕົວເລກ ຄູຈະຖາມລູກຂອງເຈົ້າເຊັ່ນ:

- 'ເລີ້ມນັບຈາກໜຶ່ງ ແລະ ຂ້ອຍຈະບອກເຈົ້າວ່າເວລາໃດຄວນຢຸດ'
- 'ເຈົ້າບອກຂ້ອຍໄດ້ບໍວ່ານີ້ແມ່ນເລກຫຍັງ?' (5)

ຄໍາຖາມເຫຼົ່ານີ້ຈະຊ່ວຍໃຫ້ຄູກໍານົດວ່າລູກຂອງທ່ານສາມາດຈື່ຈໍາຕົວເລກແລະນັບຈາກໜຶ່ງຕໍ່ໄປໄດ້ຫຼືບໍ່. ສິ່ງເຫຼົ່ານີ້ແມ່ນທັກສະຕົວເລກທີ່ສໍາຄັນທີ່ເດັກນ້ອຍຈະພັດທະນາໃນໄລຍະປີທໍາອິດຂອງເຂົາເຈົ້າຢູ່ໃນໂຮງຮຽນ.

**ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບການປະເມີນການເລີ້ມຕົ້ນຊັ້ນອະນຸບານທີ່ດີທີ່ສຸດ, ກະລຸນາຕິດຕໍ່ໂຮງຮຽນຂອງລູກທ່ານ.**

ຖ້າທ່ານຕ້ອງການນາຍພາສາ, ໃຫ້ຕິດຕໍ່ບໍລິການນາຍພາສາທາງໂທລະສັບທີ່ເບີ 131 450. ພວກເຂົາສາມາດຈັດຫານາຍພາສາໃນພາສາຂອງທ່ານເພື່ອຊ່ວຍໃນການສົນທະນາກັບໂຮງຮຽນ. ທ່ານຈະບໍ່ຖືກເກັບຄ່າບໍລິການນີ້.